# ປັດໄຈທີ່ມີຜົນຕໍ່ການຜະລິດສິນຄ້າກະສິກໍາທີ່ເປັນທ່າແຮງເພື່ອການສົ່ງອອກຕໍ່ການສ້າງລາຍໄດ້ຂອງຜູ້ຜະລິດຢູ່ 04 ແຂວງພາກໃຕ້

**ຜູ້ຂຽນ: ອໍານວຍ ວົງດອນແດງ[1], ອໍາພອນ ໄຊສົມບັດ, ບຸດຕາ ທອງມະນີ, ສຸກຈິນດາ ບົວລະວົງ, ອໍາມະລິນ ລໍອັນໄຊ**

*ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

[1]***ຜູ້ຮັບຜິດຊອບ:*** *ອໍານວຍ ວົງດອນແດງ, ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

*ເບີໂທ: +856 2095286490*

*E-mail:* vongdonedaeng2015@gmail.com

ໃນການຄົ້ນຄວ້າໃນການສຶກສາປັດໄຈທີ່ມີຜົນຕໍ່ການຜະລິດສິນຄ້າກະສິກໍາທີ່ເປັນທ່າແຮງເພື່ອການສົ່ງອອກຕໍ່ການສ້າງລາຍໄດ້ຂອງຜູ້ຜະລິດຢູ່ 04 ແຂວງພາກໃຕ້ ມີຈຸດປະສົງໃນການສຶກສາ 2 ຈຸດປະສົງຄື: 1. ສຶກສາສະພາບການຜະລິດ, ເນື້ອທີ່ການຜະລິດ ແລະ ການສົ່ງອອກສິນຄ້າກະສິກໍາທີ່ເປັນທ່າແຮງຂອງບັນດາແຂວງຢູ່ 04 ແຂວງພາກໃຕ້ ແລະ 2. ສຶກສາປັດໄຈທີ່ມີຜົນຕໍ່ການຜະລິດສິນຄ້າກະສິກໍາທີ່ເປັນທ່າແຮງເພື່ອການສົ່ງອອກຕໍ່ການສ້າງລາຍໄດ້ຂອງຜູ້ຜະລິດຢູ່ 04 ແຂວງພາກໃຕ້. ວິທີການສຶກສາແບບປະລິມານ ແລະ ແບບຄຸນນະພາບ, ໂດຍໄດ້ນໍາໃຊ້ຂໍ້ມູນທຸຕິຍະພູມ ຫຼື ຂໍ້ມູນມືສອງ (ແຕ່ປີ 2016-2024 ເປັນໄລຍະເວລາ 09 ປີ) ແລະ ປະຖົມພູມ ຫຼື ຂໍ້ມູນມືໜຶ່ງ (Cross-sectional data) ແລະ ມີຂໍ້ມູນທັງໝົດ 163 ຂໍ້ມູນ, ໃຊ້ເສດຖະມິຕິເຂົ້າໃນການວິເຄາະໂດຍໃຊ້ແບບຈໍາລອງອະທິບາຍການພົວພັນຂອງຕົວປ່ຽນຕາມ ແລະ ຕົວປ່ຽນອິດສະຫຼະນໍາໃຊ້ເຂົ້າໃນການວິເຄາະແບບປະລິມານໂດຍໃຊ້ສົມຜົນທົດຖອຍ (Multiple Regression) ດ້ວຍວິທີກໍາລັງສອງນ້ອຍສຸດ (Ordinary Least Squared: OLS).

ຜົນການສຶກສາສະພາບການຜະລິດສິນຄ້າຢູ່ 04 ແຂວງ ພາກໃຕ້ ພົບວ່າບັນດາສິນຄ້າທີ່ເປັນທ່າແຮງເພື່ອການສົ່ງຂອງແມ່ນປະກອບດ້ວຍ: ກາເຟ, ເຂົ້າ, ມັນຕົ້ນແປຮູບ, ກະລໍ່າປີ, ຊາ, ພືດຜັກລວມ, ກ້ວຍ, ຖົ່ວລຽນ. ເນື້ອທີ່ການຜະລິດແມ່ນມີການປ່ຽນແປງເພີ່ມຂຶ້ນ ແລະ ຫຼຸດລົງຕາມຕະຫຼາດຕ້ອງການ, ມູນຄ່າການສົ່ງອອກແມ່ນຢູ່ໃນລະດັບ 340,682,881.66 ($), ຕະຫຼາດສົ່ງອອກແມ່ນສົ່ງອອກຈາກແຂວງສູ່ແຂວງ, ຕະຫຼາດຕ່າງປະເທດເຊັ່ນ: ປະເທດໄທ, ຫວຽດນາມ, ບັນຫາການຜະລິດເພື່ອການສົ່ງອອກແມ່ນຕະຫຼາດມີຮອງຮັບແຕ່ການຜະລິດພາຍໃນບໍ່ພຽງພໍຕໍ່ກັບຄວາມຕ້ອງການຂອງຕະຫຼາດ.

ບັນດາຕົວປ່ຽນພື້ນຖານຂອງແບບຈໍາລອງທີ່ສາມາດອະທິບາຍເຖິງປັດໄຈທີ່ມີຜົນຕໍ່ການຜະລິດສິນຄ້າກະສິກໍາທີ່ເປັນທ່າແຮງເພື່ອການສົ່ງອອກຕໍ່ການສ້າງລາຍໄດ້ຂອງຜູ້ຜະລິດຢູ່ 04 ແຂວງພາກໃຕ້ ມີ 6 ຕົວປ່ຽນທີ່ສາມາດອະທິບາຍໄດ້ເຊັ່ນ: ຈໍານວນສະມາຊິກໃນຄົວເຮືອນ, ຈໍານວນແຮງງານທີ່ໃຊ້ເຂົ້າໃນການຜະລິດ, ປະສົບການໃນການຜະລິດສິນຄ້າ, ຊະນິດພືດທີ່ປູກ, ເນື້ອທີ່ຜະລິດສິຄ້າກະສິກໍາ ແລະ ການເຮັດສັນຍາເກັບຊື້ກັບຜູ້ເກັບຊື້. ສໍາລັບອີກ 10 ຕົວປ່ຽນສໍາຄັນແມ່ນບໍ່ສາມາດອະທິບາຍປັດໄຈທີ່ມີຜົນຕໍ່ການຜະລິດສິນຄ້າກະສິກໍາທີ່ເປັນທ່າແຮງເພື່ອການສົ່ງອອກຕໍ່ການສ້າງລາຍໄດ້ຂອງຜູ້ຜະລິດຢູ່ 04 ແຂວງພາກໃຕ້ ປະກອບມີຕົວປ່ຽນ: ເພດຂອງຫົວໜ້າຄົວເຮືອນ, ອາຍຸຂອງຫົວໜ້າຄົວເຮືອນ, ສະຖານະພາບ, ລະດັບການສຶກສາຂອງຫົວໜ້າຄົວເຮືອນ, ໄລຍະທາງ, ປະສິດທິພາບການຜະລິດ, ເງິນລົງທຶນໃນການບົວລະບັດຮັກສາ, ການຮ່ວມກຸ່ມການຜະລິດ, ການກູ້ຢືມເງິນ ແລະ ລະດັບຄວາມເພິ່ງພໍໃຈຂອງພືດທີ່ປູກ.

**Keywords**: ສິນຄ້າກະສິກໍາ, ທ່າແຮງການສົ່ງອອກ, ການສ້າງລາຍໄດ້ຂອງຄົວເຮືອນ.

# Factors Influencing Export-led Agricultural Production with respect to Household Income Generation in Four Southern Provinces of Laos

**Authors: Amnuay VONGDONEDAENG[1], Amphone XAYSOMBATH,**

**Noudta THONGMANY, Soukchinda BOUALAVONG, Ammalin LORVANXAY**

*Banking Institute, Bank of the Lao PDR*

[1]***Correspondence:*** *Amnuay VONGDONEDAENG, Banking Institute, Bank of the Lao PDR*

*Tel: +856 2095286490*

*E-mail: vongdonedaeng2015@gmail.com*

This study is conducted under the title of studying the Factors Influencing Export-led Agricultural Production with respect to Household Income Generation in Four Southern Provinces of Laos. There are two objectives in the study: 1. study the conditions of production, production area and potential export of agricultural products of the provinces in 04 southern provinces and 2. Study the factors that affect the production of agricultural products that are potential for export to generate income for producers in 04 southern provinces. Quantitative and qualitative study methods, using cross-sectional data or second-hand data (from 2014-2023 for a period of 10 years) and primary data or first-hand data (Cross-sectional data) and a total of 150 data, Use econometrics in the analysis using models to explain the relationship between dependent variables and independent variables used in quantitative analysis using multiple regression with the method of least squares (Ordinary Least Squared: OLS).

The results of the study of the condition of production of goods in 04 southern provinces found that the goods that have the potential to be sent include: coffee, rice, potatoes, cabbage, tea, vegetables, bananas, beans, The production area is increasing and decreasing according to market demand, the export value is at the level of 5,000,000 ($), the export market is exported from province to province, foreign markets such as Thailand, Vietnam, the problem of production for export is that the market has support but domestic production is not enough to meet the needs of the market.

The basic variables of the model that can explain the factors that affect the production of agricultural products that have potential for export to generate income for producers in 04 southern provinces. There are 6 variables that can be explained such as: the number of members in the household, the amount of labor used in production, experience in the production of products, the types of plants planted, the area where agricultural products are produced and the purchase contract with the buyer. For the other 10 important variables, it is not possible to explain the factors that affect the production of agricultural products that have the potential to be exported for the income generation of producers in 04 southern provinces, including the variables: the gender of the head of the household, the age of the head of the household, the status, the education level of the head of the household, distance, production efficiency, investment in maintenance, joint production, loan and the level of satisfaction of the raised plants.

**Keywords**: Agricultural Production, Influencing Export-led, Household Income Generation.